**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 33 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 02 ກຸມພາ 2024

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບລະດັບຊາດ ຈັດງານມະຫາກຳກິລາແຫ່ງຊາດ ຄັ້ງທີ XII ທີ່ນະຄອນຫຼວງວຽງຈັນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ( ສະບັບປັບປຸງ ) ເລກທີ 04/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍກິລາ - ກາຍະກຳ ສະບັບເລກທີ 74/ສພຊ, ລົງວັນທີ 25 ພະຈິກ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ ................/ສສກ, ລົງວັນທີ ........./ ......./ 2024.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1** ແຕ່ງຕັ້ງຄະນະຮັບຜິດຊອບລະດັບຊາດ ຈັດງານມະຫາກຳກິລາແຫ່ງຊາດ ຄັ້ງທີ XII ທີ່ນະຄອນຫຼວງວຽງຈັນ, ເຊິ່ງປະກອບມີບັນດາທ່ານ ດັ່ງນີ້:

1. ທ່ານ ປອ. ອາດສະພັງທອງ ສີພັນດອນ ເຈົ້າຄອງນະຄອນຫຼວງວຽງຈັນ ເປັນປະທານ;
2. ທ່ານ ຣສ.ປອ ພຸດ ສິມມາລາວົງ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນປະທານຮ່ວມ;
3. ທ່ານ ພູວົງ ວົງຄຳຊາວ ຮອງເຈົ້າຄອງນະຄອນຫຼວງວຽງຈັນ ເປັນຮອງປະທານ;
4. ທ່ານ ກິ່ງມະໂນ ພົມມະຫາໄຊ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ;
5. ທ່ານ ສາຍໃຈ ກົມມະສິດ ຮອງລັດຖະມົນຕີກະຊວງປ້ອງກັນປະເທດ ເປັນກຳມະການ;
6. ທ່ານ ພົຕ ສົມວັນ ສາຍລ້ອງພາ ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
7. ທ່ານ ວັນສີ ກົວມົວ ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
8. ທ່ານ ພູວົງ ກິດຕະວົງ ຮອງລັດຖະມົນຕີກະຊວງການເງິນ ເປັນກຳມະການ;
9. ທ່ານ ປອ ມະໂນທອງ ວົງໄຊ ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;
10. ທ່ານ ຈັນທະບູນ ສຸກອາລຸນ ຮອງລັດຖະມົນຕີກະຊວງພະລັງງານ-ບໍ່ແຮ່ ເປັນກຳມະການ;
11. ທ່ານ ດຣ ໄພວັນ ແກ້ວປະເສີດ ຮອງລັດຖະມົນຕີກະຊວງສາທາລະນະສຸກ ເປັນກຳມະການ;
12. ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ

ເປັນກຳມະການ;

13. ທ່ານ ລິດຕາ ຂັດທິຍະ — ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ;
14. ທ່ານ ສົມພູ ພົງສາ — ຮອງປະທານ ຄະນະກຳມະການໂອແລມປິກແຫ່ງຊາດລາວ ເປັນກຳມະການ;
15. ທ່ານ ນາງ ລຳພອຍ ສີອັກຄະຈັນ — ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ເປັນກຳມະການ;
16. ທ່ານ ສີຈັນ ຈິດຕະປັນຍາ — ຫົວໜ້າກົມກິລາລະດັບສູງ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
17. ທ່ານ ສົມພອນ ສອນດາລາ — ຫົວໜ້າພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ເປັນກຳມະການ.

**ມາດຕາ 2** ຄະນະຮັບຜິດຊອບລະດັບຊາດ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ກະກຽມຈັດງານມະຫາກຳກິລາແຫ່ງຊາດ ຄັ້ງທີ XII ໃນປີ 2025 ຢູ່ນະຄອນຫຼວງວຽງຈັນ ໃຫ້ໄດ້ຮັບຜົນດີຮອບດ້ານ ແລະ ທັນຕາມກຳນົດເວລາ;
2. ຂຶ້ນແຜນພັດທະນາ ແລະ ແຜນງົບປະມານຮັບໃຊ້ ໃຫ້ພຽງພໍກັບຄວາມຮຽກຮ້ອງຕ້ອງການ ເພື່ອສະເໜີລັດຖະບານອະນຸມັດ;
3. ຄົ້ນຄວ້າ ແລະ ຮັບຮອງເອົາລະບຽບການດ້ານຕ່າງໆ ຂອງການຈັດງານ, ການຈັດຕັ້ງການແຂ່ງຂັນ ໃນງານມະຫາກຳກິລາແຫ່ງຊາດ ຄັ້ງທີ XII ໃນປີ 2025;
4. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ນະຄອນຫຼວງວຽງຈັນ, ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ເພື່ອຮັບປະກັນໃນການຈັດງານດັ່ງກ່າວ ໃຫ້ດຳເນີນໄປດ້ວຍຜົນສຳເລັດຢ່າງຈົບງາມ;
5. ແຕ່ງຕັ້ງບັນດາກຳມະການ, ອານຸກຳມະການຝ່າຍຕ່າງໆ ຕາມຄວາມເໝາະສົມ, ຊີ້ນຳ-ນຳພາ, ຄຸ້ມຄອງ, ກວດກາ ແລະ ຄວບຄຸມແຜນການເຄື່ອນໄຫວເພື່ອໃຫ້ເໝາະສົມໂດຍກຳນົດແຈ້ງ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກຳມະການ ແລະ ອານຸກຳມະການຝ່າຍຕ່າງໆໃຫ້ຈະແຈ້ງ, ຈັດໃຫ້ມີການຝຶກອົບຮົມ ເພື່ອໃຫ້ແຕ່ລະບຸກຄົນທີ່ກ່ຽວຂ້ອງໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງຕໍ່ຄວາມຮັບຜິດຊອບຂອງຕົນ;
6. ຮຽກປະຊຸມບັນດາກຳມະການ ແລະ ອານຸກຳມະການ ເພື່ອກວດກາການຈັດຕັ້ງປະຕິບັດ ວຽກງານໃນແຕ່ລະໄລຍະ ແລະ ລາຍງານຂັ້ນເທິງຢ່າງເປັນປົກກະຕິ.

**ມາດຕາ 3** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ບັນດາແຂວງໃນທົ່ວປະເທດ, ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**